# ບົດອອກຂ່າວ

## ໃນພິທີພົບປະນັກຂ່າວ ກ່ຽວກັບການກະກຽມ

## ກອງປະຊຸມໂຕະມົນ ປະຈຳປີ 2024

## (ຄັ້ງວັນທີ ວັນທີ 4 ພະຈິກ 2024)

---

ນະຄອນຫຼວງວຽງຈັນ, ທີ່ ຫ້ອງປະຊຸມກະຊວງແຜນການ ແລະການລົງທຶນ, ທ່ານ ນາງ ພອນວັນ ອຸທະວົງ ຮອງລັດຖະມົນຕີ ກະຊວງແຜນການ ແລະການລົງທຶນ ຮ່ວມກັບ ທ່ານ ບັກໂຮເດຍ ເບີຄະນ່ອຟ, ຜູ້ປະສານງານ ອົງການສະຫະປະຊາຊາດ ປະຈຳ ສປປ ລາວ ໄດ້ກ່າວຖະແຫຼ່ງກ່ຽວກັບຄວາມພ້ອມໃນການຈັດກອງປະຊຸມໂຕະມົນ ປະຈຳປີ 2024 ພາຍໃຕ້ຫົວຂໍ້: "ເພີ່ມທະວີການເປັນຄູ່ຮ່ວມ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຂອງ ສ ປປ ລາວ'', ທີ່ຈະໄດ້ຈັດຂຶ້ນໃນວັນທີ 14 ພະຈິກ 2024 ທີ່ ຫໍປະຊຸມແຫ່ງຊາດ.

ໃນໂອກາດອັນສະຫງ່າລາສີນີ້, ທ່ານ ນາງ ພອນວັນ ອຸທະວົງ ຮອງລັດຖະມົນຕີ ກະຊວງແຜນການ ແລະການລົງທຶນ ໄດ້ແຈ້ງໃຫ້ຊາບວ່າ ກ່ຽວກັບຜົນສຳເລັດ ແລະ ຄວາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດຜັນຂະຫຍາຍຜົນກອງປະຊຸມໂຕະມົນ 2023 ຂອງບັນດາກະຊວງຂະແໜງການ, ການຈັດຕັ້ງປະຕິບັດ ທ້າຍສະໄໝຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ແລະ ນຳສະເໜີກ່ຽວກັບການສ້າງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030), ເຊິ່ງໃນປີນີ້ ລັດຖະບານ ແຫ່ງ ສປປ ລາວ ກໍ່ຄືກະຊວງແຜນການ ແລະການລົງທຶນ ໄດ້ເຊື້ອເຊີນຜູ້ແທນກອງປະຊຸມເຂົ້າຮ່ວມ ຫຼາຍກວ່າ 300 ທ່ານ ເຊິ່ງໃນນັ້ນ ປະກອບມີ ກະຊວງຂະແໜງການ, ອົງການທຽບເທົ່າກະຊວງ ລວມທັງ 17 ແຂວງ ແລະ 01 ນະຄອນຫຼວງ, ບັນດາປະເທດເພື່ອນມິດສາກົນ, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງທາງສັງຄົມ, ພາກເອກະຊົນ, ອົງການບໍ່ຫວັງຜົນກຳໄລ ແລະພາກສ່ວນທີ່ກ່ຽວຂ້ອງອື່ນໆ.

ໃນປີ 2024 ເປັນປີທີ່ມີຄວາມໝາຍຄວາມສຳຄັນຢ່າງຍິ່ງ, ເນື່ອງຈາກເປັນປີທີ່ພວກເຮົາກຳລັງຢູ່ໃນໄລຍະທ້າຍສະໄໝ ຂອງການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ

IX (2021-2025) ແລະເປັນປີທີ່ພວກເຮົາພວມກະກຽມສ້າງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X ເຊິ່ງ ກະຊວງແຜນການ ແລະການລົງທຶນ ກໍ່ຄືລັດຖະບານ ໄດ້ສຳເລັດຮ່າງທີ່ 3 ຂອງແຜນດັ່ງກ່າວເປັນທີ່ຮຽບຮ້ອຍແລ້ວ, ພ້ອມດຽວກັນນີ້, ພວກເຮົາໄດ້ສຸມໃສ່ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ໃນອີກ 01 ປີ (ປີ 2025) ທີ່ຍັງເຫຼືອ ພາຍໃຕ້ສະພາບການທີ່ທ້າທາຍຫຼາຍທີ່ສຸດ ອັນເນື່ອງມາຈາກຫຼາຍປັດໃຈ ເຊັ່ນ:

- ສະພາບເສດຖະກິດໂລກທີ່ມີການຜັນແປ ແລະ ສັບສົນ, ອັດຕາເງິນເຟີ້ ແລະຄ່າຄອງຊີບແພງ, ຜົນກະທົບຈາກໄພນ້ຳຖ້ວມ ແລະອື່ນໆ;
- ບົນພື້ນຖານ ທີ່ງົບປະມານມີຄວາມຈຳກັດ ແລະຄວາມຕ້ອງການດ້ານການພັດທະນາທີ່ມີ ຈຳນວນຫຼວງຫຼາຍ, ດັ່ງທີ່ໄດ້ກຳນົດໄວ້ໃນວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ພວກເຮົາກໍ່ໄດ້ສູ້ຊົນຈັດຕັ້ງປະຕິບັດ ວຽກງານຍຸດທະສາດດ້ານການເງິນພາຍໃຕ້ ແຜນພັດທະນເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ແລະຍຸດທະສາດອື່ນໆ;

ການກະກຽມ ກອງປະຊຸມໂຕະມົນໃນປີນີ້ ໄດ້ຮັບການນຳພາ-ຊີ້ນຳຢ່າງໃກ້ຊິດ ຈາກພະນະທ່ານນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ປະທານຄະນະຊີ້ນຳລະດັບຊາດ ເພື່ອຂະບວນການໂຕະມົນ.

ກະຊວງ ແຜນການ ແລະ ການລົງທຶນ ຮ່ວມກັບ ຫ້ອງການຜູ້ປະສານງານອົງການສະຫະປະຊາຊາດ ແລະອົງການສະຫະປະຊາຊາດເພື່ອການພັດທະນາ ປະຈຳ ສປປ ລາວ ໄດ້ເຮັດວຽກຮ່ວມກັນຢ່າງໃກ້ຊິດ ກັບບັນດາກະຊວງຂະແໜງການ, ທ້ອງຖິ່ນ, ປະເທດເພື່ອນມິດ, ຄູ່ຮ່ວມພັດທະນາ ແລະພາກສ່ວນກ່ຽວຂ້ອງອື່ນໆ ໃນການກະກຽມ ແລະ ຈັດກອງປະຊຸມໂຕະມົນໃນປີນີ້ ເຮັດໃຫ້ການກະກຽມກອງປະຊຸມໂຕະມົນ ປະຈຳປີ 2024 ພ້ອມແລ້ວເກືອບ 100 ເປີເຊັນ.

ຂ້າພະເຈົ້າ ໃນນາມຕາງໜ້າ ໃຫ້ລັດຖະບານ ແຫ່ງ ສປປ ລາວ ກໍ່ຄືຄະນະຊີ້ນຳລະດັບຊາດ ເພື່ອຂະບວນການໂຕະມົນ ເຊື່ອໝັ້ນເປັນຢ່າງຍິ່ງວ່າ ກອງປະຊຸມໂຕະມົນ ປະຈຳປີ 2024 ຈະປະສົບຜົນສຳເລັດ ແລະໄດ້ຮັບໝາກຜົນຢ່າງຈົບງາມ ຕາມເປົ້າໝາຍທີ່ວາງໄວ້. ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ທຸກພາກສ່ວນຈະເຂົ້າຮ່ວມກອງປະຊຸມດັ່ງກ່າວ ຢ່າງຕັ້ງໜ້າ ແລະ ປະກອບສ່ວນແລກປ່ຽນຄຳຄິດເຫັນຢ່າງມີສີສັນ, ກົງໄປກົງມາ ເພື່ອເຮັດໃຫ້ນະໂຍບາຍການພັດທະນາ ສປປ ລາວ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ແລະສົມບູນແບບທີ່ສຸດ ລວມທັງ ສະໜັບສະໜູນດ້ານຊັບພະຍາກອນຕ່າງໆທີ່ຈຳເປັນ ເພື່ອປະກອບສ່ວນຊຸກຍູ້ການຈັດຕັ້ງປະຕິບັດວາລະການພັດທະນາແຫ່ງຊາດ ກໍ່ຄືແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຂອງສປປລາວ ໃຫ້ມີປະສິດທິພາບ-ປະສິດທິຜົນສູງ ແລະນຳເອົາຜົນປະໂຫຍດທີ່ຈັບຕ້ອງໄດ້ ໄປສູ່ປະຊາຊົນຢ່າງແທ້ຈິງ.

**ສຳລັບຂໍ້ມູນເພີ່ມເຕີມ ກະລຸນາຕິດຕໍ່:**

ທ່ານ ສັນຕິ ຊົງນາວົງ, ຮັກສາການຫົວໜ້າພະແນກ ອົງການຈັດຕັ້ງສາກົນ, ກົມຮ່ວມມືສາກົນ, ກະຊວງ ແຜນການ ແລະ ການລົງທຶນ.
ເບີໂທຕິດຕໍ່ +85620 22 223 989  ອີເມວ: songnavong@gmail.com